สາລະບານ


ລັດຖະດຳລັດ ........................................................................................................ 2
ກົດໝາຍ ວ່າດ້ວຍ ທະບຽນຄອບຄົວ ............................................................................. 3
ໝວດທີ 1 ຫລັກການລວມ ....................................................................................... 3
ມາດຕາ 1. ໜ້າທີ່ຂອງກົດໝາຍ ວ່າດ້ວຍທະບຽນຄອບຄົວ ................................................ 3
ມາດຕາ 2. ການຈົດທະບຽນຄອບຄົວ ........................................................................ 3
ມາດຕາ 3. ຄຳຮ້ອງຂໍຈົດທະບຽນຄອບຄົວ ................................................................... 3
ມາດຕາ 4. ລະບຽບການຈົດທະບຽນຄອບຄົວ ແລະ ປື້ມບັນທຶກ ການຈົດທະບຽນຄອບຄົວ ........... 4
ມາດຕາ 5. ການປ່ຽນແປງ, ການລຶບລ້າງ ແລະ ການຄັດຄ້ານ ການຈົດທະບຽນຄອບຄົວ ............. 4
ມາດຕາ 6. ຄ່າທຳນຽມການຈົດທະບຽນຄອບຄົວ ............................................................ 4
ໝວດທີ 2 ປະເພດການຈົດທະບຽນຄອບຄົວ ................................................................... 5
ມາດຕາ 7. ການຈົດທະບຽນ ສຳມະໂນຄົວ ................................................................... 5
ມາດຕາ 8. ການປຸກ ຫລື ການມ້າງເຮືອນ ................................................................... 5
ມາດຕາ 9. ການຈົດທະບຽນການເກີດ ......................................................................... 5
ມາດຕາ 10. ການຈົດທະບຽນ ການຫາຍສາບສູນ ......................................................... 5
ມາດຕາ 11. ການຈົດທະບຽນ ການເສັຽຊີວິດ. ............................................................. 6
ມາດຕາ 12. ການຈົດທະບຽນການແຕ່ງດອງ ................................................................ 6
ມາດຕາ 13. ການຈົດທະບຽນ ການຢ່າຮ້າງ ................................................................. 7
ມາດຕາ 14. ການຈົດທະບຽນ ການເອົາເດັກມາເປັນລູກລ້ຽງ ............................................ 7
ມາດຕາ 15. ການຈົດທະບຽນ ການຮັບຮູ້ຄວາມເປັນພໍ່ ................................................... 7
ມາດຕາ 16. ການຈົດທະບຽນ ການປ່ຽນຊື່ ແລະ ນາມສະກຸນ. .......................................... 7
ມາດຕາ 17. ການຈົດທະບຽນການໂຍກຍ້າຍ ................................................................ 8
ມາດຕາ 18. ການເກັບ, ຝັງ, ເຜົາ ຫລື ຍ້າຍຊາກສົບ ..................................................... 8
ໝວດທີ 3 ການຈັດຕັ້ງວຽກງານທະບຽນຄອບຄົວ. .......................................................... 9
ມາດຕາ 19. ການຈັດຕັ້ງວຽກງານທະບຽນຄອບຄົວ ......................................................... 9
ມາດຕາ 20. ໜ້າທີ່ຂອງການຈັດຕັ້ງທະບຽນຄອບຄົວ ....................................................... 9
ມາດຕາ 21. ການກວດກາທະບຽນສຳມະໂນຄົວ ............................................................ 9
ໝວດທີ 4 ມາດຕະການຕໍ່ຜູ້ລະເມີດ ......................................................................... 10

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ເລກທີ 21 ສປປ
ລົງວັນທີ 6/4/92

# ລັດຖະດຳລັດ

## ຂອງປະທານປະເທດ

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ທະບຽນຄອບຄົວ.

- ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

- ອີງຕາມມະຕິຕົກລົງຂອງກອງປະຊຸມ ຄັ້ງທີ່ 7 ສະໄໝສາມັນ ຂອງສະພາປະຊາຊົນສູງສຸດ ຊຸດທີ່ II ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ທະບຽນຄອບຄົວ, ສະບັບເລກທີ 03/ສປສ ລົງວັນທີ 30 ທັນວາ 1991;

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1: ປະກາດໃຊ້ກົດໝາຍວ່າດ້ວຍ ທະບຽນຄອບຄົວ.
ມາດຕາ 2: ລັດຖະດຳລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 6 ເມສາ 1992

ໄກສອນ ພົມວິຫານ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ສະພາປະຊາຊົນສູງສຸດ ເລກທີ 03/ສປສ

# ກົດໝາຍ ວ່າດ້ວຍ ທະບຽນຄອບຄົວ

## ໝວດທີ 1 ຫລັກການລວມ

### ມາດຕາ 1. ໜ້າທີ່ຂອງກົດໝາຍ ວ່າດ້ວຍທະບຽນຄອບຄົວ

**ກົດໝາຍ ວ່າດ້ວຍທະບຽນຄອບຄົວ ມີໜ້າທີ່ວາງລະບຽບການ ກ່ຽວກັບການຈົດທະບຽນສໍາມະໂນຄົວ,ການເກີດ, ການຫາຍສາບສູນ, ການເສັຽຊີວິດ, ການແຕ່ງດອງ, ການຢ່າຮ້າງ, ການເອົາເດັກມາເປັນລູກລ້ຽງ, ການຮັບຮູ້ຄວາມເປັນພໍ່, ການປ່ຽນຊື່ ແລະ ນາມສະກຸນ, ການໂຍກຍ້າຍລວມທັງການປຸກ ຫລື ການມ້າງເຮືອນ ເພື່ອອໍານວຍຄວາມສະດວກໃຫ້ແກ່ອົງການລັດ ໃນການຄຸ້ມຄອງພົນລະເມືອງ ແລະ ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.**

### ມາດຕາ 2. ການຈົດທະບຽນຄອບຄົວ

**ການຈົດທະບຽນຄອບຄົວ ໃຫ້ດໍາເນີນຢູ່ຫ້ອງການທະບຽນຄອບຄົວເມືອງ. ພາຍຫລັງທີ່ໄດ້ຮັບໃບຢັ້ງຢືນຈົດທະບຽນຄອບຄົວແລ້ວ ຕ້ອງນໍາມາແຈ້ງ ຕໍ່ນາຍບ້ານຂອງຕົນ.**

ສໍາລັບຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນັ້ນກໍໃຫ້ປະຕິບັດຕາມກົດໝາຍສະບັບນີ້.

### ມາດຕາ 3. ຄໍາຮ້ອງຂໍຈົດທະບຽນຄອບຄົວ

**ຄໍາຮ້ອງຂໍຈົດທະບຽນຄອບຄົວ ໃຫ້ຍື່ນຕໍ່ເຈົ້າໜ້າທີ່ທະບຽນຄອບຄົວເມືອງ ໂດຍແມ່ນນາຍບ້ານເປັນຜູ້ຮັບຜິດຊອບ. ໃນຄໍາຮ້ອງຂໍນັ້ນ ຕ້ອງບອກເຖິງຈຸດປະສົງ, ເຫດຜົນ ແລະ ລົງລາຍເຊັນຂອງຜູ້ຮ້ອງຂໍ.**

ການປະກອບສໍານວນຄໍາຮ້ອງຂໍຈົດທະບຽນຄອບຄົວນັ້ນໃຫ້ປະຕິບັດຕາມລະບຽບການຈົດທະບຽນຄອບຄົວ ຊຶ່ງອົງການກ່ຽວຂ້ອງເປັນຜູ້ວາງອອກ.

## ມາດຕາ 4. ລະບຽບການຈົດທະບຽນຄອບຄົວ ແລະ ປື້ມບັນທຶກ ການຈົດທະບຽນຄອບຄົວ

**ການຈົດທະບຽນຄອບຄົວ ຕ້ອງເຮັດຊ້ອງໜ້າເຈົ້າໜ້າທີ່ທະບຽນຄອບຄົວ ແລະ ບັນທຶກໄວ້ໃນປື້ມບັນທຶກການຈົດທະບຽນຄອບຄົວ ແລ້ວຜູ້ຮ້ອງຂໍ ແລະ ເຈົ້າໜ້າທີ່ທະບຽນຄອບຄົວ ພ້ອມກັນລົງລາຍເຊັນໃສ່ປື້ມບັນທຶກດັ່ງກ່າວ.**

ພາຍຫລັງທີ່ໄດ້ຈົດທະບຽນຄອບຄົວແລ້ວ ເຈົ້າໜ້າທີ່ທະບຽນຄອບຄົວ ຕ້ອງອອກໃບຢັ້ງຢືນໃຫ້ຜູ້ກ່ຽວໄວ້ເປັນຫລັກຖານ.

ການປ່ຽນແປງທະບຽນຄອບຄົວ, ການລົບລ້າງທະບຽນຄອບຄົວ, ແບບໃບຢັ້ງຢືນຈົດທະບຽນຄອບຄົວ, ລະບຽບ ແລະ ກຳນົດເວລາຮັກສາປື້ມບັນທຶກ ການຈົດທະບຽນຄອບຄົວນັ້ນ ໃຫ້ປະຕິບັດຕາມລະບຽບການ ຂອງອົງການທີ່ກ່ຽວຂ້ອງ.

## ມາດຕາ 5. ການປ່ຽນແປງ, ການລົບລ້າງ ແລະ ການຄັດຄ້ານ ການຈົດທະບຽນຄອບຄົວ

**ຖ້າເຫັນວ່າ ການຈົດທະບຽນຄອບຄົວຕົນນັ້ນ ຫາກບໍ່ຖືກຕ້ອງແລ້ວ ຜູ້ກ່ຽວມີສິດຮ້ອງຂໍຕໍ່ເຈົ້າໜ້າທີ່ທະບຽນຄອບຄົວ ບ່ອນຕົນຢູ່.**

ໃນກໍລະນີທີ່ເຈົ້າໜ້າທີ່ທະບຽນຄອບຄົວ ຫາກບໍ່ພິຈາລະນາໃຫ້ ຕາມຄຳຮ້ອງຂໍຂອງຕົນແລ້ວ ຜູ້ກ່ຽວກໍມີສິດຮ້ອງຂໍຕໍ່ສານ.

ຖ້າເຫັນວ່າ ການຈົດທະບຽນຄອບຄົວນັ້ນ ຫາກບໍ່ຖືກຕ້ອງແລ້ວ ຜູ້ທີ່ມີສິດຜົນປະໂຫຍດກ່ຽວຂ້ອງ ມີສິດຂໍຄັດຄ້ານການຈົດທະບ ຽນດັ່ງກ່າວ.

ຖ້າຫາກມີຂໍ້ຂັດແຍ່ງ ກ່ຽວກັບການຈົດທະບຽນຄອບຄົວກໍໃຫ້ປະຕິບັດຕາມ ວັກທີ 1 ແລະ ວັກທີ 2 ຂອງມາດຕານີ້.

ເມື່ອເຈົ້າໜ້າທີ່ທະບຽນຄອບຄົວ ຫາກເຫັນວ່າການຈົດທະບຽນຄອບຄົວ ບໍ່ຖືກຕ້ອງແລ້ວ ກໍສາມາດປ່ຽນແປງ ຫລື ລົບລ້າງໄດ້. ຖ້າວ່າ ຜູ້ທີ່ຮ້ອງຂໍຈົດທະບຽນນັ້ນ ຫາກບໍ່ເຫັນດີນຳກໍໃຫ້ສົ່ງຂຶ້ນສານຕັດສິນ.

## ມາດຕາ 6. ຄ່າທຳນຽມການຈົດທະບຽນຄອບຄົວ

**ການຈົດທະບຽນສຳມະໂນຄົວ, ການເກີດ, ການຫາຍສາບສູນ, ການເສັຽຊີວິດ, ການແຕ່ງ ດອງ, ການຢ່າຮ້າງ, ການເອົາເດັກມາເປັນລູກລ້ຽງ, ການຮັບຮູ້ຄວາມເປັນພໍ່, ການໂຍກຍ້າຍ ແລະ ການປ່ຽນຊື່ ແລະ ນາມສະກຸນຕ້ອງເສັຽຄ່າທຳນຽມ ຕາມລະບຽບການທີ່ໄດ້ກຳນົດໄວ້.**

## ໝວດທີ 2 ປະເພດການຈົດທະບຽນຄອບຄົວ

### ມາດຕາ 7. ການຈົດທະບຽນ ສຳມະໂນຄົວ

ເຈົ້າໜ້າທີ່ທະບຽນຄອບຄົວເມືອງ ຕ້ອງເຮັດທະບຽນສຳມະໂນຄົວທຸກໆເຮືອນ ທີ່ຢູ່ໃນຂອບເຂດຄຸ້ມຄອງຂອງຕົນ ແລະ ມອບປື້ມສຳມະໂນຄົວ ໃຫ້ຫົວໜ້າຄອບຄົວແຕ່ລະເຮືອນ ເກັບຮັກສາໄວ້.

**ສຳລັບນາຍບ້ານ ກໍຕ້ອງໃຫ້ມີປື້ມບັນທຶກ ສຳມະໂນຄົວສະບັບສຳເນົາໄວ້.**

ນອກຈາກເຈົ້າໜ້າທີ່ທະບຽນຄອບຄົວເມືອງແລ້ວ ຫ້າມບຸກຄົນອື່ນປ່ຽນແປງ, ເພີ່ມເຕີມ ຫລື ດັດແກ້ສຳມະໂນຄົວ.

### ມາດຕາ 8. ການປຸກ ຫລື ການມ້າງເຮືອນ

ບຸກຄົນຜູ້ໃດ ຫາກໄດ້ປຸກ ຫລື ມ້າງເຮືອນຂອງຕົນນັ້ນຕ້ອງແຈ້ງໃຫ້ນາຍບ້ານ ຂອງຕົນຊາບນັບແຕ່ມື້ໄດ້ປຸກ ຫລື ມ້າງເປັນຕົ້ນໄປ ເພື່ອຄວາມສະດວກໃນການຄຸ້ມຄອງ.

### ມາດຕາ 9. ການຈົດທະບຽນການເກີດ

ເມື່ອມີເດັກເກີດຢູ່ໃນເຮືອນຂອງຕົນ ໃຫ້ຫົວໜ້າຄອບຄົວ ຫລື ຜູ້ຕາງໜ້າ ໄປແຈ້ງຕໍ່ນາຍບ້ານ.

ສຳລັບ ເດັກທີ່ເກີດຢູ່ບ່ອນອື່ນນັ້ນ ໃຫ້ ພໍ່ ຫລື ແມ່ ໄປແຈ້ງຕໍ່ນາຍບ້ານ ບ່ອນທີ່ເດັກເກີດ ຫລື ບ່ອນອາດຈະແຈ້ງໄດ້.

ໃນກໍລະນີ ທີ່ພໍ່ ແມ່ ຫາກເຈັບເປັນ ບໍ່ສາມາດໄປແຈ້ງ ດ້ວຍຕົນເອງໄດ້ ຫລື ພໍ່ແມ່ ຫາກເສັຽຊີວິດນັ້ນ ຈະໃຫ້ຍາດພີ່ນ້ອງ, ຄົນໃກ້ຄຽງບ່ອນທີ່ເດັກເກີດ ຫລື ບຸກຄົນອື່ນໄປແຈ້ງແທນກໍໄດ້.

ກຳນົດເວລາແຈ້ງການເກີດ ແມ່ນ ບໍ່ໃຫ້ກາຍ ສາມສິບ ມື້ ນັບແຕ່ມື້ເດັກເກີດ ເປັນຕົ້ນໄປ.

ບຸກຄົນໃດ ຫາກໄດ້ພົບພໍ້ ເດັກເກີດໃໝ່ ທີ່ຖືກປະຖິ້ມໄວ້ ໃຫ້ໄປແຈ້ງຕໍ່ ນາຍບ້ານ ຫລື ເຈົ້າໜ້າທີ່ຕຳຫລວດ ໃນເຂດທີ່ຕົນພົບພໍ້ໂດຍໄວ.

ເມື່ອນາຍບ້ານ ໄດ້ຮັບແຈ້ງເດັກເກີດໃໝ່ແລ້ວ ກໍໃຫ້ອອກໃບຢັ້ງຢືນການເກີດໄວ້ເປັນຫລັກຖານເພື່ອມອບໃຫ້ຜູ້ຮ້ອງຂໍນຳໄປຈົດທະບຽນການເກີດ ນຳເຈົ້າໜ້າທີ່ທະບຽນຄອບຄົວພາຍໃນກຳນົດ ສາມສິບ ມື້ ນັບແຕ່ມື້ໄດ້ຮັບໃບຢັ້ງຢືນການເກີດເປັນຕົ້ນໄປ.

### ມາດຕາ 10. ການຈົດທະບຽນ ການຫາຍສາບສູນ

ການຈົດທະບຽນ ກ່ຽວກັບຜູ້ທີ່ຖືກສານຕັດສິນ ປະກາດວ່າ ເປັນຜູ້ຫາຍສາບສູນນັ້ນ ໃຫ້ດຳເນີນຢູ່ຫ້ອງການທະບຽນຄອບຄົວ ບ່ອນຜູ້ຮ້ອງຂໍຢູ່ ພາຍໃນກຳນົດ ສາມສິບມື້ ນັບແຕ່ມື້ສານລົງຄຳຕັດສິນເປັນຕົ້ນໄປ.

## ມາດຕາ 11. ການຈົດທະບຽນ ການເສັຍຊີວິດ.

**ຖ້າວ່າມີຜູ້ໃດຜູ້ໜຶ່ງ ຢູ່ໃນເຮືອນຂອງຕົນ ຫາກໄດ້ເສັຍຊີວິດ ໃຫ້ໄປແຈ້ງຕໍ່ ນາຍບ້ານ .**

ຖ້າຜູ້ໃດຜູ້ໜຶ່ງ ຫາກໄດ້ພົບຊາກສົບ ໃຫ້ໄປແຈ້ງຕໍ່ນາຍບ້ານ ຫລື ເຈົ້າໜ້າທີ່ຕຳຫຼວດ ບ່ອນທີ່ພົບຊາກສົບໃນທັນໃດ.

ບຸກຄົນຜູ້ໃດທີ່ໄດ້ທຳການຮັກສາ ປິ່ນປົວຄົນເຈັບ ຫລື ໄດ້ທຳການຄອດລູກ ຕາມວິຊາຊີບຂອງຕົນ ເມື່ອຄົນເຈັບ ຫລື ເດັກທີ່ເກີດມາໃໝ່ນັ້ນ ຫາກເສັຍຊີວິດແລ້ວ ຕ້ອງອອກໃບຢັ້ງຢືນການເສັຍຊີວິດ.

ເມື່ອໄດ້ຮັບແຈ້ງການເສັຍຊີວິດແລ້ວ ນາຍບ້ານ ຕ້ອງອອກໃບຢັ້ງຢືນການເສັຍຊີວິດ ໃຫ້ໄວ້ເປັນຫລັກຖານ ເວັ້ນເສັຍແຕ່ການເສັຍຊີວິດນັ້ນ ຫາກບໍ່ຈະແຈ້ງ ຫລື ເສັຍຊີວິດຍ້ອນໂລກຕິດແປດ ທີ່ເປັນອັນຕະລາຍ. ໃນກໍລະນີ ນີ້ ໃຫ້ແຈ້ງຕໍ່ເຈົ້າໜ້າທີ່ສາທາລະນະສຸກ ຫລື ເຈົ້າໜ້າທີ່ຕຳຫຼວດໂດຍດ່ວນ ແລະໃຫ້ໂຈະການອອກໃບຢັ້ງຢືນການເສັຍຊີວິດຈົນກ່ວາຈະໄດ້ຮັບຄຳເຫັນຈາກເຈົ້າໜ້າທີ່ດັ່ງກ່າວ.

ພາຍຫລັງທີ່ໄດ້ຮັບໃບຢັ້ງຢືນ ການເສັຍຊີວິດແລ້ວ ຕ້ອງນຳໄປຈົດທະບຽນ ການເສັຍຊີວິດ ນຳເຈົ້າໜ້າທີ່ທະບຽນຄອບຄົວ ພາຍໃນກຳນົດ ສາມສິບມື້.

ການຈົດທະບຽນ ກ່ຽວກັບຜູ້ທີ່ຖືກສານຕັດສິນ ປະກາດວ່າ ເປັນຜູ້ເສັຍຊີວິດນັ້ນ ໃຫ້ດຳເນີນຢູ່ຫ້ອງການທະບຽນຄອບຄົວ ບ່ອນຜູ້ຮ້ອງຂໍຢູ່ ພາຍໃນກຳນົດສາມສິບມື້ ນັບແຕ່ມື້ສານລົງຄຳຕັດສິນ ເປັນຕົ້ນໄປ.

## ມາດຕາ 12. ການຈົດທະບຽນການແຕ່ງດອງ

ການຈົດທະບຽນການແຕ່ງດອງ ໃຫ້ດຳເນີນຢູ່ຫ້ອງການທະບຽນຄອບຄົວ ຕາມບ່ອນຢູ່ຂອງຄູ່ບ່າວສາວ ຫລື ຂອງຝ່າຍໃດຝ່າຍໜຶ່ງ ຫລື ຕາມບ່ອນຢູ່ຂອງພໍ່ແມ່ ຄູ່ບ່າວສາວ ຫລື ພໍ່ແມ່ ຂອງຝ່າຍໃດຝ່າຍໜຶ່ງ.

ຄູ່ບ່າວສາວທີ່ມີຈຸດປະສົງ ຢາກແຕ່ງດອງນຳກັນ ຕ້ອງເຮັດຄຳຮ້ອງ ເປັນລາຍລັກອັກສອນແລ້ວຍື່ນຕໍ່ເຈົ້າໜ້າທີ່ທະບຽນຄອບຄົວ ຕາມທີ່ໄດ້ບົ່ງໄວ້ ໃນວັກເທິງນີ້.

ຄຳຮ້ອງຂໍແຕ່ງດອງ ບໍ່ໃຫ້ຂັດກັບກົດໝາຍ ວ່າດ້ວຍຄອບຄົວເປັນຕົ້ນ ມາດຕາ 9 ແລະ ມາດຕາ 10. ໃນຄຳຮ້ອງຕ້ອງບອກວ່າ ຄູ່ບ່າວສາວແຕ່ລະຄົນເຄີຍມີລູກ ຫລື ບໍ່.

ເຈົ້າໜ້າທີ່ທະບຽນຄອບຄົວ ຕ້ອງພິຈາລະນາ ຄຳຮ້ອງຂໍແຕ່ງດອງ ຢ່າງຊ້າບໍ່ໃຫ້ເກີນ ສາມສິບມື້ນັບແຕ່ມື້ໄດ້ຮັບຄຳຮ້ອງຂໍ ເປັນຕົ້ນໄປ.

ຖ້າເຫັນວ່າ ຄູ່ບ່າວສາວນັ້ນ ຫາກມີເງື່ອນໄຂຄົບຖ້ວນແລ້ວ ເຈົ້າໜ້າທີ່ທະບຽນຄອບຄົວ ກໍຈະຮຽກພວກກ່ຽວເຂົ້າມາຈົດທະບຽນແຕ່ງດອງ ຊ້ອງໜ້າພະຍານ ສາມຄົນ ແລະ ມອບໃບຢັ້ງຢືນການແຕ່ງດອງ ໃຫ້ຄູ່ຜົວເມັຍດັ່ງກ່າວໄວ້ເປັນຫລັກຖານ ພ້ອມທັງອະທິບາຍແກ່ຄູ່ບ່າວສາວກ່ຽວກັບສິດ ແລະພັນທະທີ່ຈະເກີດຂຶ້ນ ພາຍຫລັງການຈົດທະບຽນແຕ່ງດອງແລ້ວ.

### ມາດຕາ 13. ການຈົດທະບຽນ ການຢ່າຮ້າງ

ການຈົດທະບຽນການຢ່າຮ້າງ ໃຫ້ດໍາເນີນຢູ່ຫ້ອງການທະບຽນຄອບຄົວ ຕາມບ່ອນຢູ່ຂອງຄູ່ຜົວເມັຽ ຫລື ບ່ອນຢູ່ຂອງຝ່າຍໃດຝ່າຍໜຶ່ງ ຂອງຄູ່ຜົວເມັຽ ຕາມຄໍາຕັດສິນຂອງສານ.

**ພາຍຫລັງທີ່ສານໄດ້ຕັດສິນ ໃຫ້ຢ່າຮ້າງແລ້ວ ສານຕ້ອງສໍາເນົາ ຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ເປັນສອງສະບັບແລ້ວສົ່ງໃຫ້ເຈົ້າໜ້າທີ່ທະບຽນຄອບຄົວ ໜຶ່ງສະບັບ ເພື່ອຈົດທະບຽນຢ່າຮ້າງແລ້ວມອບໃບຢັ້ງຢືນການຢ່າຮ້າງ ໃຫ້ຄູ່ຜົວເມັຽ ຜູ້ລະສະບັບ.**

**ຊາຍ ຫລື ຍິງ ທີ່ຢ່າຮ້າງກັນແລ້ວ ກ່ອນຈະຈົດທະບຽນແຕ່ງດອງໃໝ່ໄດ້ ຕ້ອງມີໃບຢັ້ງຢືນການຢ່າຮ້າງເສັຽກ່ອນ.**

### ມາດຕາ 14. ການຈົດທະບຽນ ການເອົາເດັກມາເປັນລູກລ້ຽງ

ການຈົດທະບຽນການເອົາເດັກມາເປັນລູກລ້ຽງ ໃຫ້ດໍາເນີນຢູ່ຫ້ອງການທະບຽນຄອບຄົວ ບ່ອນທີ່ນາຍບ້ານ ອອກຄໍາຕົກລົງ ກ່ຽວກັບການເປັນລູກລ້ຽງ.

ພາຍຫລັງທີ່ ນາຍບ້ານ ອອກຄໍາຕົກລົງ ກ່ຽວກັບການເປັນລູກລ້ຽງແລ້ວ ຕ້ອງສົ່ງໃຫ້ເຈົ້າໜ້າທີ່ທະບຽນຄອບຄົວ ເພື່ອຈົດທະບຽນ ພາຍໃນກໍານົດ ສາມມື້ ແລ້ວມອບໃບຢັ້ງຢືນການຈົດທະບຽນໃຫ້ ພໍ່ລ້ຽງ, ແມ່ລ້ຽງ.

ໃນກໍລະນີ ທີ່ການເອົາເດັກມາເປັນລູກລ້ຽງນັ້ນ ຫາກຖືກສານຕັດສິນປ່ຽນແປງ ຫລື ລົບລ້າງແລ້ວ ເຈົ້າໜ້າທີ່ທະບຽນຄອບຄົວ ຕ້ອງປ່ຽນແປງທະບຽນຄອບຄົວ ໃຫ້ສອດຄ່ອງກັບຄໍາຕັດສິນຂອງສານ.

### ມາດຕາ 15. ການຈົດທະບຽນ ການຮັບຮູ້ຄວາມເປັນພໍ່

**ການຈົດທະບຽນ ການຮັບຮູ້ຄວາມເປັນພໍ່ ໃຫ້ດໍາເນີນຢູ່ຫ້ອງການທະບຽນຄອບຄົວ ຕາມບ່ອນຢູ່ຂອງພໍ່ ຫລື ແມ່ ຂອງເດັກ ຫລື ບ່ອນທີ່ສານລົງຄໍາຕັດສິນ ກ່ຽວກັບການຮັບຮູ້ຄວາມເປັນພໍ່.**

ການຈົດທະບຽນ ການຮັບຮູ້ຄວາມເປັນພໍ່ ແມ່ນ ປະຕິບັດຕາມ ຄໍາຕັດສິນຂອງສານ ຫລື ຕາມຄໍາສະເໜີ ຂອງພໍ່ ແລະ ແມ່ ຫລື ຂອງພໍ່ ໃນກໍລະນີແມ່ຫາກເສັຽຊີວິດ, ບໍ່ມີຄວາມສາມາດ ທາງດ້ານການປະພຶດ, ຖືກຕັດສິດໃນການເປັນແມ່ ຫລື ບໍ່ສາມາດກໍານົດບ່ອນຢູ່ໄດ້.

ໃນການຈົດທະບຽນ ການຮັບຮູ້ຄວາມເປັນພໍ່ ເຈົ້າໜ້າທີ່ທະບຽນຄອບຄົວ ຕ້ອງອີງໃສ່ຫລັກຖານຢັ້ງຢືນຄວາມເປັນພໍ່ນັ້ນ.

### ມາດຕາ 16. ການຈົດທະບຽນ ການປ່ຽນຊື່ ແລະ ນາມສະກຸນ.

**ການຈົດທະບຽນ ການປ່ຽນຊື່ ຂອງຜູ້ທີ່ເຖິງກະສຽນອາຍຸໃຫ້ດໍາເນີນຢູ່ຫ້ອງການທະບຽນຄອບຄົວບ່ອນຜູ້ຮ້ອງຂໍຢູ່.**

ການຈົດທະບຽນ ການປ່ຽນຊື່ ຂອງເດັກ ທີ່ຍັງບໍ່ທັນເຖິງກະສຽນອາຍຸນັ້ນ ຕ້ອງແມ່ນ ພໍ່ ຫລື ແມ່ ຂອງເດັກເປັນຜູ້ສະເໜີ.

ການປ່ຽນນາມສະກຸນ ຂອງພໍ່ແມ່ທັງສອງ ຈະເຮັດໃຫ້ນາມສະກຸນຂອງເດັກ ທີ່ຍັງບໍ່ທັນເຖິງກະສຽນອາຍຸນັ້ນປ່ຽນແປງໄປນຳ.

ຖ້າຫາກວ່າມີການປ່ຽນແຕ່ນາມສະກຸນຂອງພໍ່ ຫລື ແມ່ເທົ່ານັ້ນ ການປ່ຽນແປງນາມສະກຸນຂອງເດັກ ທີ່ຍັງບໍ່ທັນເຖິງກະສຽນອາຍຸ ແມ່ນຂຶ້ນກັບການຕົກລົງຂອງພໍ່ແມ່, ໃນກໍລະນີທີ່ຫາກບໍ່ສາມາດຕົກລົງກັນໄດ້ນັ້ນ ໃຫ້ຖືເອົາຕາມຄຳຕັດສິນຂອງສານ.

ໃນເມື່ອການຈົດທະບຽນ ການປ່ຽນຊື່ ແລະ ນາມສະກຸນ ຫາກພົວພັນກັບການຈົດທະບຽນປະເພດອື່ນແລ້ວ ເຈົ້າໜ້າທີ່ທະບຽນຄອບຄົວ ຕ້ອງລົບລ້າງໃບຢັ້ງຢືນເກົ່າ ແລະ ອອກໃບຢັ້ງຢືນໃໝ່ໃຫ້ໂດຍສອດຄ່ອງກັບຊື່ ແລະ ນາມສະກຸນໃໝ່.

## ມາດຕາ 17. ການຈົດທະບຽນການໂຍກຍ້າຍ

ເມື່ອສະມາຊິກຄອບຄົວຂອງຄົນຜູ້ໃດຜູ້ໜຶ່ງ ຫາກໂຍກຍ້າຍໄປຢູ່ບ່ອນອື່ນແລ້ວ ໃຫ້ຫົວໜ້າຄອບຄົວ ໄປແຈ້ງຕໍ່ນາຍບ້ານ ພາຍໃນກຳນົດ ສາມມື້ ນັບແຕ່ມື້ໄດ້ໂຍກຍ້າຍເປັນຕົ້ນໄປ.

ສຳລັບການໂຍກຍ້າຍໄປໝົດຄອບຄົວນັ້ນ ໃຫ້ແຈ້ງກ່ອນການໂຍກຍ້າຍ ເຈັດມື້.

ພາຍຫລັງ ທີ່ໄດ້ໂຍກຍ້າຍໄປເຖິງບ່ອນຢູ່ໃໝ່ແລ້ວ ໃຫ້ໄປສະເໜີຕໍ່ ນາຍບ້ານ ພາຍໃນກຳນົດ ຊາວສີ່ຊົ່ວໂມງ ນັບແຕ່ມື້ໄປຮອດເປັນຕົ້ນໄປ ເພື່ອເຮັດທະບຽນສຳມະໂນຄົວໃໝ່.

## ມາດຕາ 18. ການເກັບ, ຝັງ, ເຜົາ ຫລື ຍ້າຍຊາກສົບ

**ບຸກຄົນຜູ້ໃດຜູ້ໜຶ່ງ ຈະເກັບ, ຝັງ, ເຜົາ ຫລື ຍ້າຍຊາກສົບ ອອກຈາກເຮືອນ ຫລື ບ່ອນທີ່ເສັຽຊີວິດນັ້ນ ຕ້ອງໄດ້ຮັບອະນຸຍາດຈາກນາຍບ້ານເສັຽກ່ອນ ເວັ້ນເສັຽແຕ່ໃນກໍລະນີທີ່ ຫາກມີຄວາມຈຳເປັນອັນຮີບດ່ວນ ກ່ຽວກັບຄວາມປອດໄພ ຫລື ສະຫວັດດີພາບ ຂອງປະຊາຊົນເທົ່ານັ້ນ ແຕ່ກໍຕ້ອງແຈ້ງໃຫ້ນາຍບ້ານຊາບ.**

ການເກັບ, ຝັງ, ເຜົາ ຫລື ຍ້າຍຊາກສົບ ຕ້ອງປະຕິບັດຕາມເນື້ອໃນຂອງໃບອະນຸຍາດນັ້ນ.

## ໝວດທີ 3 ການຈັດຕັ້ງວຽກງານທະບຽນຄອບຄົວ.

### ມາດຕາ 19. ການຈັດຕັ້ງວຽກງານທະບຽນຄອບຄົວ

ການຈັດຕັ້ງວຽກງານທະບຽນຄອບຄົວ ຢູ່ຂັ້ນສູນກາງ ແມ່ນ ຂຶ້ນກັບກະຊວງພາຍໃນ, ຢູ່ຂັ້ນແຂວງ ຫລື ກຳແພງນະຄອນ ແມ່ນ ຂຶ້ນກັບເຈົ້າແຂວງ ຫລື ເຈົ້າຄອງກຳແພງນະຄອນ,ຢູ່ຂັ້ນເມືອງແມ່ນຂຶ້ນກັບເຈົ້າເມືອງ.

**ເຈົ້າໜ້າທີ່ສະຖານທູດ ຫລື ກົງສູນລາວ ປະຈຳຢູ່ຕ່າງປະເທດ ຊຶ່ງກະຊວງການຕ່າງປະເທດ ໄດ້ແຕ່ງຕັ້ງໃຫ້ເປັນຜູ້ຮັບຜິດຊອບ ວຽກງານທະບຽນຄອບຄົວນັ້ນ ມີໜ້າທີ່ຈົດທະບຽນປະເພດຕ່າງໆ ສຳລັບຜູ້ທີ່ມີສັນຊາດລາວ ຢູ່ຕ່າງປະເທດຕາມກົດໝາຍ.**

### ມາດຕາ 20. ໜ້າທີ່ຂອງການຈັດຕັ້ງທະບຽນຄອບຄົວ

**ການຈັດຕັ້ງທະບຽນຄອບຄົວ ມີໜ້າທີ່ຄຸ້ມຄອງ ພົນລະເມືອງ ແລະ ທະບຽນຄອບຄົວ ແນໃສ່ຮັບປະກັນ ທາງດ້ານການເມືອງ, ເສດຖະກິດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ. ເພື່ອຈຸດປະສົງດັ່ງກ່າວ ການຈັດຕັ້ງທະບຽນຄອບຄົວ ມີໜ້າທີ່ຈົດທະບຽນ ສຳມະໂນຄົວ, ການເກີດ, ການຫາຍສາບສູນ, ການເສັຽຊີວິດ, ການແຕ່ງດອງ, ການຢ່າຮ້າງ, ການເອົາເດັກມາເປັນລູກລ້ຽງ, ການປ່ຽນຊື່ ແລະ ນາມສະກຸນ, ການໂຍກຍ້າຍ ພ້ອມທັງການປ່ຽນແປງ, ການເພີ່ມເຕີມ, ການລຶບລ້າງທະບຽນຄອບຄົວ, ການອອກໃບຢັ້ງຢືນໃໝ່ ໃນກໍລະນີທີ່ໃບຢັ້ງຢືນເກົ່າຫາກໄດ້ເສັຽຫາຍ, ຮັກສາປຶ້ມບັນທຶກຈົດທະບຽນຄອບຄົວ, ອອກໃບຢັ້ງຢືນການຈົດທະບຽນຄອບຄົວ ແລະ ຕິດຕາມກວດກາການຈົດທະບຽນຄອບຄົວ.**

### ມາດຕາ 21. ການກວດກາທະບຽນສຳມະໂນຄົວ

ເພື່ອຮັບປະກັນການຄຸ້ມຄອງພົນລະເມືອງ ແລະ ການຈົດທະບຽນຄອບຄົວ ໃຫ້ຖືກຕ້ອງນັ້ນຕ້ອງມີການກວດກາທະບຽນ ສຳມະໂນຄົວ ໃນທ້ອງຖິ່ນໃດໜຶ່ງ ຫລື ໃນທົ່ວປະເທດ ແຕ່ຕ້ອງມີຄຳສັ່ງຂອງ ລັດຖະບານ ຫລື ອົງການທີ່ລັດຖະບານ ມອບສິດໃຫ້.

ກ່ອນຈະເຂົ້າໄປກວດກາ ເຈົ້າໜ້າທີ່ທະບຽນຄອບຄົວ ຫລື ຜູ້ທີ່ໄດ້ຮັບມອບໝາຍຈາກ ເຈົ້າໜ້າທີ່ທະບຽນຄອບຄົວນັ້ນ ຕ້ອງແຈ້ງໃຫ້ນາຍບ້ານຊາບ ແລະ ສະເໜີບັດ ຫລື ໜັງສືຢັ້ງຢືນການເປັນເຈົ້າໜ້າທີ່ ແລະ ຄຳສັ່ງ ໃຫ້ກວດກາຕໍ່ຫົວໜ້າຄອບຄົວ ຫລື ຜູ້ຕາງໜ້າ.

ຫົວໜ້າຄອບຄົວແຕ່ລະເຮືອນ ຫລື ຜູ້ຕາງໜ້າຕ້ອງໃຫ້ຄວາມຮ່ວມມື ແກ່ເຈົ້າໜ້າທີ່ທະບຽນຄອບຄົວ ທີ່ເຂົ້າໄປໃນເຮືອນຂອງຕົນ ເພື່ອກວດກາ ແລະ ຕ້ອງຕອບຄຳຖາມ ຕາມຄວາມເປັນຈິງ, ພ້ອມທັງລົງລາຍເຊັນໄວ້ ໃນລາຍການກວດການັ້ນ ເພື່ອຢັ້ງຢືນຂໍ້ຄວາມຕ່າງໆ ທີ່ໄດ້ກວດກາແລ້ວນັ້ນ.

ສຳລັບເຈົ້າໜ້າທີ່ທະບຽນຄອບຄົວ ຫລື ຜູ້ທີ່ໄດ້ຮັບມອບໝາຍຈາກເຈົ້າໜ້າທີ່ທະບຽນຄອບຄົວກໍຕ້ອງລົງລາຍເຊັນໃນລາຍການກວດການັ້ນ.

## ໝວດທີ 4 ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 22. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນຜູ້ໃດ ຫາກບໍ່ໃຫ້ຄວາມຮ່ວມມື ແກ່ເຈົ້າໜ້າທີ່ທະບຽນຄອບຄົວ ເຊັ່ນ: ບໍ່ມາຕາມໝາຍຮຽກ, ບໍ່ຍອມບອກຫລື ປິດບັງຄວາມຈິງ, ບໍ່ໃຫ້ຫລັກຖານຢັ້ງຢືນ, ຂັດຂວາງເຈົ້າໜ້າທີ່ ແລະ ອື່ນໆ ຈະຖືກປັບໃໝ ແຕ່ 1.000 ກີບ ຫາ 3.000 ກີບ ຫລື ໄດ້ຮັບໂທດ ຕາມກົດໝາຍອາຍາ.

ສຳລັບ ເຈົ້າໜ້າທີ່ທະບຽນຄອບຄົວ ທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມກົດໝາຍນັ້ນຈະໄດ້ຮັບໂທດຕາມກົດໝາຍ.

ກົດກາໝາຍສະບັບນີ້ ໄດ້ລົງຄະແນນສຽງຮັບຮອງເອົາ ຢ່າງເປັນເອກະສັນ ໃນກອງປະຊຸມສະໄໝສາມັນຄົບຄະນະເທື່ອທີ ເຈັດ ຂອງສະພາປະຊາຊົນສູງສຸດ (ຊຸດທີ II) ໃນວັນທີ 30 ທັນວາ 1991 ເວລາ 15 ໂມງ 30 ນາທີ.

ປະທານສະພາປະຊາຊົນສູງສຸດ

ໜູຮັກ ພູມສະຫວັນ